# **ຕົວຢ່າງ,,** ສຳລັບໜ້ານີ້ເປັນພຽງເອກະສານອ້າງອີງເທົ່ານັ້ນ.

Employment Development Department
State of California

**ວັນທີແຈ້ງການ: 00/00/0000**

**ຊື່, ທີ່ຢູ່ຂອງຜູ້ຮ້ອງຂໍ,**
**ລະຫັດເມືອງ,**
**ລະຫັດຫັດໄປສະນີ CA**

## ແຈ້ງການຂອງການຮ້ອງຂໍເພື່ອຈະລົງທະບຽນເພື່ອເຂົ້າເຮັດວຽກ

ທ່ານໄດ້ຍື່ນໃບຮ້ອງຂໍປະກັນໄພຫວ່າງງານ (UI)ເປັນທີ່ຮຽບຮ້ອຍແລ້ວ. ເພື່ອຮັບປະກັນຄວາມເໝາະສົມຂອງທ່ານທີ່ຈະໄດ້ຮັບເງິນຊ່ວຍເຫຼືອ UI, ທ່ານຕ້ອງລົງທະບຽນເຂົ້າເຮັດວຽກໂດຍໃຊ້ CalJOBS[SM], ລະບົບແລກປ່ຽນແຮງງານອອນໄລຂອງລັດ California.

**ສິ່ງທີ່ສຳຄັນ: ການບໍ່ລົງທະບຽນ ແລະ ປັບປຸງຊີວະປະຫວັດຫຍໍ້ຂອງທ່ານໃນ CalJOBS ອາດຈະສົ່ງຜົນກະທົບຕໍ່ສິດໃນການຮັບເງິນຊ່ວຍເຫຼືອຂອງ UI.**

ເພື່ອປະຕິບັດຕາມຄວາມຮຽກຮ້ອງຕ້ອງການນີ້, ພຽງແຕ່ລົງທະບຽນເຂົ້າ CalJOBS ຂອງທ່ານໃຫ້ຮຽບຮ້ອຍ ແລະ ຕື່ມຊີວະປະຫວັດຫຍໍ້ເຂົ້າໃນໂປຼໄຟລ໌ຂອງທ່ານບໍ່ໃຫ້ກາຍ 21 ວັນນັບຕັ້ງແຕ່ວັນອອກແຈ້ງການນີ້. ຖ້າທ່ານມີບັນຊີຂອງ CalJOBS ແລ້ວ, ທ່ານຈະຕ້ອງປັບປຸງຂໍ້ມູນການລົງທະບຽນ ແລະ ປະຫວັດການເຮັດວຽກຂອງທ່ານ. ລ່ວງການລົງທະບຽນ ແລະ ການສືບຕໍ່ການສ້າງຕັ້ງຄືນໃຫ້ທັນເວລາໃນ CalJOBS ຈະຮັບປະກັນໃຫ້ທ່ານມີສິດໄດ້ຮັບເງິນຊ່ວຍເຫຼືອຂອງ UI.

ຖ້າທ່ານບໍ່ເຄີຍໄດ້ໃຊ້ CalJOBS ມາກ່ອນ, EDD ໄດ້ເລີ່ມຕົ້ນບັນທຶກການລົງທະບຽນລ່ວງໜ້າ ສຳລັບ ທ່ານແລ້ວ. ເພື່ອເຮັດໃຫ້ສຳເລັດຕາມຂັ້ນຕອນ, ເຂົ້າສູ່ລະບົບທີ່ CalJOBS (caljobs.ca.gov). ການລົງທະບຽນລ່ວງໜ້າແມ່ນໃສ່ນາມສະກຸນເຕັມຂອງທ່ານ, ຊື່ແທ້ຂອງທ່ານ, ແລະ ສີ່ຕົວເລກສຸດທ້າຍຂອງລບັດປະກັນສັງຄົມ (SSN) ຂອງທ່ານ. ລະຫັດຜ່ານຂອງທ່ານແມ່ນສອງຕົວເລກໃນວັນເກີດຂອງທ່ານ, ສອງຕົວເລກໃນເດືອນເກີດຂອງທ່ານ, ແລະ ສີ່ຕົວເລກສຸດທ້າຍຂອງບັດປະກັນສັງຄົມ SSN ຂອງທ່ານ.

**ຕົວຢ່າງ:** ສຳລັບຜູ້ທີ່ມີຊື່ວ່າ Jane Smith, ເກີດໃນວັນທີ 4 ເດືອນ ກໍລະກົດ, ແລະ ສີ່ຕົວເລກສຸດທ້າຍຂອງບັດປະກັນສັງຄົມ SSN ແມ່ນ 1234:

| | |
|---|---|
| **ຊື່ຜູ້ໃຊ້:** | Smithj1234 |
| **ລະຫັດຜ່ານ:** | 04071234 |

ກະລຸນາຢ່າລືມທີ່ຈະນຳໃຊ້ຂໍ້ມູນຂອງທ່ານເອງ ເມື່ອທ່ານເຂົ້າສູ່ລະບົບຂອງ CalJOBS. ເມື່ອທ່ານເຂົ້າສູ່ລະບົບເປັນຄັ້ງທຳອິດໂດຍໃຊ້ຂໍ້ມູນການລົງທະບຽນລ່ວງໜ້າ, ທ່ານຈະໄດ້ຮັບການກະຕຸ້ນໃຫ້ປ່ຽນລະຫັດລັບຊົ່ວຄາວ. ຖ້າທ່ານບໍ່ສາມາດເຂົ້າສູ່ລະບົບໄດ້, ຕ້ອງການຄວາມຊ່ວຍເຫລືອ, ຫຼື ບໍ່ສາມາດເຂົ້າເຖິງອິນເຕີເນັດໄດ້, ກະລຸນາຕິດຕໍ່ສູນຊອກວຽກເຮັດງາAmerica's Job Center of California[SM] (AJCC). AJCC ແຕ່ລະແຫ່ງຈະມີພະນັກງານສາມາດການຊ່ວຍທ່ານຊອກວຽກໃຫ້ທ່ານເຮັດ ແລະ ການຝຶກອົບຮົມຕາມຄວາມຕ້ອງການ.

ທີ່ຢູ່ ແລະ ເບີໂທລະສັບຂອງ AJCC ໃນທ້ອງຖິ່ນຂອງທ່ານແມ່ນ:

**ສູນຊອກວຽກເຮັດງານທຳໃນລັດຄາລີຟໍເນຍແຫ່ງປະເທດອາເມລິກາໃນທ້ອງຖິ່ນຂອງທ່ານ**
**0000 Main St.**
**ເມືອງ, ລະຫັດໄປສະນີ CA**
**000-00-0000**

ໃນ CalJOBS, ທ່ານສາມາດສ້າງຊີວະປະຫວັດຫຍໍ້ທີ່ມີຄຸນນະພາບເຊິ່ງນາຍຈ້າງທີ່ລົງທະບຽນສາມາດກວດເບິ່ງໄດ້. ນອກຈາກນີ້ ທ່ານຍັງສາມາດກວດເບິ່ງ ແລະ ສະໝັກຕຳແໜ່ງວຽກງານທີ່ກຳລັງເປີດຮັບສະໝັກຢ່າງຫຼາກຫຼາຍທົ່ວລັດ California. ທ່ານສາມາດຕັ້ງຄ່າ "Virtual Recruiter" ໃນພາກສ່ວນການບໍລິການຜູ້ຊອກຫາວຽກເພື່ອແຈ້ງໃຫ້ທ່ານຊາບໂດຍອັດຕະໂນມັດຜ່ານທາງອີເມວກ່ຽວຂ້ອງກັບການປະກາດຮັບສະໝັກວຽກໃໝ່ທີ່ກົງກັບຄວາມສາມາດ ແລະ ຈຸດປະສົງຂອງທ່ານ.

EDD, ທີ່ເປັນໜຶ່ງໃນຄວາມສະເໝີພາບຂອງນາຍຈ້າງ/ໂຄງການແມ່ນຄູ່ຮ່ວມງານໃນການປພກາດນີ້. ອຸປະກອນການຊ່ວຍເຫຼືອ ແລະ ການບໍລິການແມ່ນມີໃຫ້ເມື່ອມີການຮ້ອງຂໍໃຫ້ບຸກຄົນທີ່ພິການ. ການຮຽກຮ້ອງໃຫ້ບັນດາບໍລິການ, ອຸປະກອນການຊ່ວຍເຫຼືອ ແລະ/ຫຼື ຮູບແບບທາງເລືອກຈຳເປັນຕ້ອງເຮັດໂດຍການໂທຫາເບີຂ້າງເທິງ (ຂຽງ) ຫຼື TTY 1-800-815-9387.